ທິປະໄຕ ປະຊາຊົນລາວ

ະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 130 /ລບ

ນະຄອນຫຼວງວຽງຈັນ, ວັນທີ 01. 06. 2016.

ສຳນັກງານ ອົງການ
ພາສີ ພິມມະກອນ
ສາລະບັນ
ເລກທີ.................
ວັນທີ 07 JUN 2016
ໂທລະສັບ 021 217770

# ລັດ
# ວ່າດ້ວຍກອງທຶນທາງ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍທາງຫຼວງ ສະບັບເລກທີ 04/99/ສພຊ, ລົງວັນທີ 03 ເມສາ 1999;
- ອີງຕາມກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 036/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 035/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 339/ຍທຂ, ລົງວັນທີ 30 ເມສາ 2015.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ກອງທຶນທາງ ເພື່ອລະດົມ, ຂົນຂວາຍ ແລະ ສະສົມທຶນ ແນໃສ່ໃຫ້ມີທຶນພຽງພໍ ແລະ ຍືນຍົງ ເພື່ອນຳໃຊ້ເຂົ້າໃນວຽກງານບູລະນະຮັກສາ, ສ້ອມແປງທາງຫຼວງ ແລະ ຄວາມປອດໄພຕາມທາງຫຼວງ ໃຫ້ມີປະສິດທິຜົນ.

**ມາດຕາ 2 ກອງທຶນທາງ**

ກອງທຶນທາງ ຂຽນຫຍໍ້ວ່າ: " ກທທ " ແມ່ນກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອສະສົມທຶນຈາກ ທັງພາຍໃນ ແລະ ຕ່າງປະເທດ ນຳໃຊ້ເຂົ້າໃນວຽກງານບູລະນະຮັກສາ, ສ້ອມແປງ, ຟື້ນຟູ, ກໍ່ສ້າງ ທາງຫຼວງ ແລະ ຄວາມປອດໄພຕາມທາງຫຼວງ ແນໃສ່ເຮັດໃຫ້ການສັນຈອນ ມີຄວາມສະດວກ, ປອດໄພ ແລະ ໂລ່ງລ່ຽນ.

**ມາດຕາ 3 ຫຼັກການຄຸ້ມຄອງ ແລະນຳໃຊ້ ກທທ**

ການຄຸ້ມຄອງ ກທທ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຕ້ອງລວມສູນ ແລະ ເປັນເອກະພາບ ຕາມລະບົບງົບປະມານແຫ່ງລັດ;
2. ນຳໃຊ້ ກທທ ໃຫ້ຖືກຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;

3. ທຸກລາຍຮັບ ແລະລາຍຈ່າຍ ຕ້ອງຜ່ານລະບົບບັນຊີຂອງຄັງເງິນແຫ່ງຊາດ, ລົງບັນຊີຕາມຫຼັກການ ແລະ ລະບຽບການພື້ນຖານການບັນຊີແຫ່ງລັດ;

4. ບໍລິຫານງົບປະມານຂອງ ກທທ ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ ແລະ ໂປ່ງໃສ, ຮັບປະກັນລາຍຈ່າຍ ຕາມແຜນການປະຈຳແຕ່ລະສົກປີ;

5. ມີການກວດກາ ແລະ ກວດສອບ ເປັນປົກກະຕິ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະການນຳໃຊ້ ກທທ

### ມາດຕາ 4 ແຫຼ່ງລາຍຮັບ

ແຫຼ່ງລາຍຮັບເຂົ້າໃນ ກທທ ປະກອບດ້ວຍ:

1. ຄ່າທຳນຽມໃຊ້ນ້ຳມັນ (ຄ່າຊັກເພີ່ມຈາກລາຄານ້ຳມັນກາຊວນ ແລະ ແອັດຊັງ ນອກຈາກລາຍຮັບພາສີຂາເຂົ້າ, ອາກອນຕ່າງໆ ແລະ ຄ່າຊັກອື່ນໆຈາກນ້ຳມັນ);
2. ຄ່າທຳນຽມລົດຜ່ານແດນ ຕາມສົນທິສັນຍາສາກົນ;
3. ຄ່າທຳນຽມທາງປະຈຳປີ;
4. ຄ່າບໍລິການຜ່ານຂົວທາງ;
5. ຄ່າປະມູນຂາຍປ້າຍທະບຽນລົດ;
6. ຄ່າປັບໃໝຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຈະລາຈອນທາງບົກ, ການຂົນສົ່ງທາງບົກ ແລະ ທາງນ້ຳ;
7. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
8. ລາຍຮັບອື່ນໆທີ່ເຫັນວ່າເໝາະສົມ.

### ມາດຕາ 5 ການນຳໃຊ້ ກທທ

ກທທ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການບູລະນະຮັກສາ ແລະ ສ້ອມແປງທາງຫຼວງ ແລະບັນດາຂົວມິດຕະພາບ ບໍ່ລຸດ ເກົ້າສິບສ່ວນຮ້ອຍ (90%) ຂອງແຜນລາຍຈ່າຍໃນແຕ່ລະສົກປີ ຊຶ່ງໃນນີ້:

ກ. ທາງຫຼວງແຫ່ງຊາດ ແລະ ບັນດາຂົວມິດຕະພາບ ບໍ່ລຸດ ແປດສິບສ່ວນຮ້ອຍ (80%) ຈ່າຍເຂົ້າໃນ:

- ວຽກບູລະນະຮັກສາ ແລະສ້ອມແປງທາງຫຼວງ ຕາມປົກກະຕິ, ຕາມກຳນົດ, ສຸກເສີນ, ຟື້ນຟູ ແລະ ຍົກລະດັບທາງເດີມ;
- ວຽກສົມທົບກັບໂຄງການຮ່ວມມືກັບຕ່າງປະເທດ ໃນການບູລະນະຮັກສາ ແລະ ສ້ອມແປງທາງຫຼວງ ຕາມປົກກະຕິ ແລະຕາມກຳນົດ.

ຂ. ທາງຫຼວງທ້ອງຖິ່ນ ບໍ່ເກີນ ຊາວສ່ວນຮ້ອຍ (20%) ຈ່າຍເຂົ້າໃນ:

- ວຽກບູລະນະຮັກສາ ແລະສ້ອມແປງທາງຫຼວງ ຕາມປົກກະຕິ, ຕາມກຳນົດ, ສຸກເສີນ, ຟື້ນຟູ ແລະ ຍົກລະດັບທາງເດີມ;
- ວຽກສົມທົບກັບໂຄງການຮ່ວມມືກັບຕ່າງປະເທດ ໃນການບູລະນະຮັກສາ ແລະ ສ້ອມແປງທາງຫຼວງ ຕາມປົກກະຕິ ແລະ ຕາມກຳນົດ.

2. ວຽກກໍ່ສ້າງເສັ້ນທາງໃໝ່ ທີ່ເຫັນວ່າຈຳເປັນຕາມການຕົກລົງຂອງລັດຖະບານ ບໍ່ເກີນ ຫ້າຈຸດສາມສ່ວນຮ້ອຍ (5,3%) ຂອງແຜນລາຍຈ່າຍໃນແຕ່ລະສົກປີ;

3. ວຽກຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງນະຄອນຫຼວງວຽງຈັນ (ອພບ) ບໍ່ເກີນ ສູນຈຸດສອງສ່ວນຮ້ອຍ (0,2%) ຂອງແຜນລາຍຈ່າຍໃນແຕ່ລະສົກປີ;

4. ວຽກງານຄວາມປອດໄພຕາມທາງຫຼວງ ບໍ່ລຸດ ສອງຈຸດຫ້າສ່ວນຮ້ອຍ (2,5%) ຂອງແຜນລາຍຈ່າຍໃນແຕ່ລະສົກປີ ຊຶ່ງຈ່າຍເຂົ້າໃນ:

- ການໂຄສະນາເຜີຍແຜ່ກ່ຽວກັບຄວາມປອດໄພຕາມທາງຫຼວງ;
- ການກວດສອບ, ປັບປຸງຄວາມປອດໄພຕາມທາງຫຼວງ;
- ການປະກອບສ່ວນເຂົ້າໃນກິດຈະກຳອື່ນ ທີ່ກ່ຽວຂ້ອງກັບຄວາມປອດໄພຕາມທາງຫຼວງ.

5. ວຽກຄຸ້ມຄອງ, ບໍລິຫານ ກອງທຶນທາງ ບໍ່ເກີນ ສອງສ່ວນຮ້ອຍ (2%) ຂອງແຜນລາຍຈ່າຍໃນແຕ່ລະສົກປີ.

ການນຳໃຊ້ກອງທຶນທາງທັງໝົດໃນແຕ່ລະປີ, ຕ້ອງສ້າງແຜນລາຍຈ່າຍຕາມວິໄນແຜນການ ການເງິນ ແລ້ວສະເໜີຕໍ່ຄະນະກຳມະການຄຸ້ມຄອງ ກທທ ພິຈາລະນາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງດຳລັດສະບັບນີ້.

## ໝວດທີ 3
## ການຄຸ້ມຄອງ ບໍລິຫານ ກທທ

### ມາດຕາ 6 ໂຄງປະກອບການຈັດຕັ້ງຂອງ ກທທ

ໂຄງປະກອບການຈັດຕັ້ງຂອງ ກທທ ມີດັ່ງນີ້:

1. ຄະນະກຳມະການຄຸ້ມຄອງ ກທທ;
2. ກອງເລຂາ ຄະນະກຳມະການຄຸ້ມຄອງ ກທທ.

### ມາດຕາ 7 ຄະນະກຳມະການຄຸ້ມຄອງ ກທທ

ຄະນະກຳມະການຄຸ້ມຄອງ ກທທ ຖືກແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີ ຂອງລັດຖະມົນຕີກະຊວງໂຍທາທິການ ແລະຂົນສົ່ງ ຊຶ່ງມີພາລະບົດບາດ ຊີ້ນຳ, ຄຸ້ມຄອງການນຳໃຊ້ ກທທ ໃຫ້ຖືກ ຕ້ອງຕາມເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 8 ໂຄງປະກອບບຸກຄະລາກອນຂອງ ກທທ

ຄະນະກຳມະການຄຸ້ມຄອງ ກທທ ປະກອບດ້ວຍ:

1. ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ເປັນປະທານ;
2. ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ;
3. ຮອງລັດຖະມົນຕີກະຊວງການເງິນ ເປັນຮອງປະທານ;
4. ຫົວໜ້າກົມການຄ້າພາຍໃນ, ກະຊວງອຸດສະຫະກຳ ແລະ ການຄ້າ ເປັນຄະນະ;
5. ຫົວໜ້າກົມຕຳຫຼວດຈະລາຈອນ, ກະຊວງປ້ອງການຄວາມສະຫງົບ ເປັນຄະນະ;
6. ຫົວໜ້າກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
7. ຫົວໜ້າກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
8. ຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
9. ຕົວແທນຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ;
10. ຕົວແທນຈາກກຸ່ມຜູ້ນຳເຂົ້ານ້ຳມັນເຊື້ອໄຟ ເປັນຄະນະ;

11. ຫົວໜ້າກົມການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະທັງເປັນຫົວໜ້າກອງເລຂາ.

**ມາດຕາ 9 ສິດ ແລະໜ້າທີ່ ຂອງຄະນະກຳມະການຄຸ້ມຄອງ ກທທ**

ຄະນະກຳມະການຄຸ້ມຄອງ ກທທ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ ຮັບຮອງ ແຜນພັດທະນາ, ແຜນການເຄື່ອນໄຫວ ແລະ ງົບປະມານ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຂອງ ກທທ;
2. ພິຈາລະນາ ຮັບຮອງ ເອົາລະບຽບການຕ່າງໆຂອງ ກທທ;
3. ຈັດສັນທຶນເຂົ້າໃສ່ແຜນການ, ແຜນງານ ແລະ ໂຄງການຕ່າງໆ ເພື່ອນຳສະເໜີລັດຖະບານພິຈາລະນາ ອະນຸມັດ ເປັນແຕ່ລະສົກປີງົບປະມານ;
4. ພິຈາລະນາຮັບຮອງໂຄງການບູລິມະສິດໃນການບູລະນະຮັກສາ, ສ້ອມແປງທາງຫຼວງ ແລະ ຄວາມປອດໄພຕາມທາງຫຼວງ;
5. ຊີ້ນຳ, ນຳພາ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ, ການຄຸ້ມຄອງ ບັນຊີລາຍຮັບ ແລະ ລາຍຈ່າຍ ປະຈຳທຸກເດືອນ ແລະ ປະຈຳສົກປີ ຕາມການສັງລວມ ຂອງກອງເລຂາ ກທທ;
6. ສະໜອງຂໍ້ມູນ, ເປີດເຜີຍລາຍຮັບ ແລະ ລາຍຈ່າຍ ໃຫ້ແກ່ສັງຄົມ ເປັນປະຈຳແຕ່ລະສົກປີງົບປະມານ;
7. ອະທິບາຍ, ຊີ້ແຈງຄວາມສົນໃຈ, ຂໍ້ຂ້ອງໃຈ ຂອງປະຊາຊົນ ກ່ຽວກັບ ກທທ;
8. ຄົ້ນຄວ້າ, ສະເໜີການດັດແກ້ ຄ່າທຳນຽມໃຊ້ນ້ຳມັນ, ຄ່າປັບໃໝ ແລະ ອັດຕາສ່ວນຕ່າງໆ ທີ່ເປັນແຫຼ່ງລາຍຮັບຂອງ ກທທ ຕໍ່ລັດຖະບານ ເພື່ອພິຈາລະນາໃນແຕ່ລະໄລຍະ;
9. ໂຄສະນາ ກ່ຽວກັບການເຄື່ອນໄຫວ ແລະ ແຜນຄວາມຕ້ອງການຂອງວຽກງານບູລະນະຮັກສາ, ສ້ອມແປງທາງຫຼວງ ແລະ ຄວາມປອດໄພຕາມທາງຫຼວງ ເພື່ອລະດົມ, ຂົນຂວາຍທຶນ;
10. ຮັບຜິດຊອບຕໍ່ຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຄຸ້ມຄອງບໍລິຫານ ກທທ;
11. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງ ກທທ ຕໍ່ລັດຖະບານ ຢ່າງເປັນປົກກະຕິ.

**ມາດຕາ 10 ກອງປະຊຸມຄະນະກຳມະການຄຸ້ມຄອງ ກທທ**

ກອງປະຊຸມຂອງຄະນະກຳມະການຄຸ້ມຄອງ ກທທ ຈັດຂຶ້ນຢ່າງໜ້ອຍ ສອງ ຄັ້ງຕໍ່ປີ.

ກອງປະຊຸມ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີຄະນະກຳມະການຄຸ້ມຄອງ ກທທ ເຂົ້າຮ່ວມເກີນກວ່າເຄິ່ງໜຶ່ງ ຂອງຄະນະກຳມະການທັງໝົດ.

ຄຳຕົກລົງຂອງກອງປະຊຸມ ໃຫ້ຖືເອົາຕາມສຽງສ່ວນຫຼາຍ, ໃນກໍລະນີມີສຽງເທົ່າກັນ ຄຳເຫັນຂອງປະທານ ເປັນອັນຊີ້ຂາດ, ຄຳເຫັນຂອງສຽງສ່ວນໜ້ອຍ ກໍຕ້ອງບັນທຶກໄວ້.

ເບ້ຍປະຊຸມ ໃຫ້ປະຕິບັດຕາມລະບຽບການຂອງກະຊວງການເງິນ.

**ມາດຕາ 11 ກອງເລຂາ**

ກອງເລຂາຄະນະກຳມະການຄຸ້ມຄອງ ກທທ ເປັນເສນາທິການໃຫ້ຄະນະກຳມະການຄຸ້ມຄອງ ກທທ ໃນການຄຸ້ມຄອງ ແລະ ນຳໃຊ້ ກທທ.

ປະທານຄະນະກຳມະການຄຸ້ມຄອງ ກທທ ເປັນຜູ້ແຕ່ງຕັ້ງກອງເລຂາ ພ້ອມທັງກຳນົດໜ້າທີ່ ແລະ ຂອບເຂດສິດ ຕາມການສະເໜີຂອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ.

## ໝວດທີ 4
## ການເປີດບັນຊີ, ການກວດສອບ ແລະການລາຍງານ

**ມາດຕາ 12 ການເປີດບັນຊີຂອງ ກທທ**

ກທທ ຕ້ອງເປີດບັນຊີເງິນຝາກໃນລະບົບຄັງເງິນແຫ່ງຊາດ ຕາມລະບຽບການທີ່ໄດ້ກໍານົດໄວ້.

**ມາດຕາ 13 ການກວດສອບບັນຊີ**

ບັນຊີຂອງ ກທທ ຕ້ອງໄດ້ຮັບການກວດສອບທຸກໆປີ ໂດຍອົງການກວດສອບແຫ່ງລັດ ຊຶ່ງຜົນຂອງການກວດສອບ ຕ້ອງໄດ້ແຈ້ງໃຫ້ສາທາລະນະຊົນ, ໃນກໍລະນີ ຫາກພົບເຫັນວ່າມີການກະທໍາຜິດ, ຜູ້ທີ່ກະທໍາຜິດດັ່ງກ່າວ ຕ້ອງຖືກດໍາເນີນຄະດີຕາມກົດໝາຍ.

**ມາດຕາ 14 ການລາຍງານ**

ຄະນະກໍາມະການຄຸ້ມຄອງ ກທທ ຕ້ອງລາຍງານກ່ຽວກັບການນໍາໃຊ້ ກທທ ຕໍ່ກະຊວງການເງິນ ແລະ ອົງການກວດສອບແຫ່ງລັດ ພ້ອມທັງລາຍງານການເຄື່ອນໄຫວວຽກງານຂອງ ກທທ ໃຫ້ລັດຖະບານ ປີລະ ສອງ ຄັ້ງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 15 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການສົມທົບກັບ ກະຊວງການເງິນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ປາກົດຜົນເປັນຈິງ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ດໍາລັດສະບັບນີ້ ປ່ຽນແທນ ດໍາລັດວ່າດ້ວຍກອງທຶນບູລະນະຮັກສາທາງຫຼວງ ສະບັບເລກທີ 09/ນຍ, ລົງວັນທີ 15 ມັງກອນ 2001.

ຂໍ້ກໍານົດ ຫຼື ບົດບັນຍັດໃດ ທີ່ຂັດກັບດໍາລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງສິງ ທໍາມະວົງ

ຫໍສະໝຸດແຫ່ງຊາດ ສ.ປ.ປ.ລາວ
ລົງທະບຽນ ເລກທີ: 1012
ວັນທີ: 3.6.2014
ໂທລະສັບ: 243710